ຫົວໜ້າສະຖາບັນອຸດສາຫະກຳ ການຄ້າ ແລະ ພະລັງງານ ມີຄວາມຫວັງໃໝ່



ຫວ່າງມໍ່ໆມານີ້, ຄະນະຜູ້ແທນນຳໂດຍ ທ່ານ ປອ ອານຸສັກ ພິງສະຫວັດ ຫົວໜ້າສະຖາບັນອຸດສາຫະກຳ ການຄ້າ ແລະ ພະລັງງານ, ກະຊວງອຸດສາຫະກຳ ແລະ ການຄ້າ ສປປ ລາວ ໄດ້ເດີນທາງຢ້ຽມຢາມນະຄອນ ຊິນຢູ, ແຂວງຈຽງຊີ, ສປ ຈີນ ເພື່ອເຂົ້າຮ່ວມກອງປະຊຸມສົນທະນາກ່ຽວກັບການພັດທະນາອຸດສາຫະກຳຄຸນນະພາບສູງ ຊິນຢູ ໃນຫົວຂໍ້ “Tiangong-kaiwu ເຊື່ອມຕໍ່ທົ່ວໂລກ” ປີ 2026. ໃນລະຫວ່າງການປະຊຸມ 3 ມື້, ຄະນະຜູ້ແທນໄດ້ເດີນທາງໄປຢ້ຽມຢາມ ໂຮງງານຜະລິດແບັດເຕີຣີລິທຽມ ການເຟິງ (Ganfeng Lithium), ກຸ່ມບໍລິສັດເຫຼັກ ຊິນຢູ (Xinsteel) ແລະ ຫໍອະນຸສອນສະຖານ ຫຼົ່ວຟາງ ແລະ ອື່ນໆ. ຈາກອຸການນຳໃຊ້ຂອງແບັດເຕີຣີໜຶ່ງກ້ອນ, ສູ່ການໄດ້ຮັບໝາກຜົນປັກລອດລາຍແບບບັງເອີນ, ຈີນເຖິງການທົດລອງລິດພະລັງງານໄຟຟ້າ, ທ່ານ ອານຸສັກ ພິງສະຫວັດ ໄດ້ມີຄວາມຄາດຫວັງໃໝ່ຕໍ່ເສັ້ນທາງການຫັນເປັນພະລັງງານໃໝ່ຂອງລາວ.

ໃນຕອນຄ່ຳຂອງວັນທີ 7 ຕຸລາ, ຄະນະຜູ້ແທນໄດ້ເດີນທາງໄປຢ້ຽມຢາມໝູ່ບ້ານບູຮານ ເຈຍຊຸ່ງ. ບັນຍາກາດການສະແດງສິລະປະພື້ນບ້ານນຳລັງຄຶກຄື້ນ, ໂດຍສະເພາະຕອນທີ່ເຈົ້າສາວໂຍນລູກໝາກບານປັກລອດລາຍທີ່ສວຍງາມ ໄດ້ດຶງດູດຄວາມສົນໃຈ ແລະ ເຮັດໃຫ້ບັນຍາກາດຮ້ອນແຮງຂຶ້ນຮອດຈຸດສູງສຸດ. ລູກໝາກບານປັກລອດລາຍລອຍໂຄ້ງຜ່ານຝູງຊົນ ແລະ ຕົກລົງໃສ່ມືຂອງ ທ່ານ ອານຸສັກ ພິງສະຫວັດ. ເມື່ອຮັບໄດ້ໝາກບານ, ເບື້ອງຕົ້ນທ່ານເຖິງກັບຕື່ນເຕັ້ນເລັກນ້ອຍ, ແຕ່ຫຼັງຈາກນັ້ນກໍເຜີຍຮອຍຍິ້ມອອກມາ. “ນີ້ແມ່ນສັນຍານທີ່ມີຄວາມໝາຍສຳຄັນ, ປ່ຽບເໝືອນໂອກາດຮ່ວມມືທີ່ບໍ່ຄາດຄິດມາກ່ອນ,” ທ່ານ ອານຸສັກ ພິງສະຫວັດ ກ່າວ.

ໃນຕອນເຊົ້າຂອງວັນທີ 8 ຕຸລາ, ຈຸດໝາຍທຳອິດຂອງຄະນະຜູ້ແທນແມ່ນໂຮງງານຜະລິດແບັດເຕີຣີລິທຽມ ການເຟິງ. ໃນພື້ນທີ່ວາງສະແດງຜະລິດຕະພັນແບັດເຕີຣີ, ທ່ານ ອານຸສັກ ພິງສະຫວັດ ໄດ້ໂນ້ມຕົວລົງພ້ອມກັບຖາມຄຳຖາມທີ່ຢູ່ໃນໃຈຂອງຕົນມາໂດຍຕະຫຼອດການເດີນທາງວ່າ: “ແບັດເຕີຣີເຫຼົ່ານີ້ມີອາຍຸການໃຊ້ງານດົນສໍ່າໃດ?” ພະນັກງານຕອບວ່າ: “15 ປີ”. ທ່ານ ອານຸສັກ ພິງສະຫວັດ ກ່າວວ່າ: “ໃຊ້ໄດ້ດົນສົມຄວນນໍ້, ການຍອມຮັບຂອງປະຊາຊົນລາວຕໍ່ພະລັງງານໃໝ່ ແມ່ນແຕ່ອີງໃສ່ລາຄາ, ອາຍຸການໃຊ້ງານຂອງແບັດເຕີຣີ ເປັນຕົວກຳນົດໂດຍກົງ ເຖິງປະສິດທິພາບຄວາມຄຸ້ມຄ່າຂອງອຸປະກອນຊຸດນັ້ນ ແລະ ຜູກພັນກັບ ອຸດສາຫະກຳນັ້ນສາມາດຈະເຕີບໂຕໄດ້ຢ່າງແທ້ຈິງຫຼືບໍ່.

ໃນໄລຍະພັກຜ່ອນ ຂອງການປະຊຸມ, ທ່ານ ອານຸສັກ ພິງສະຫວັດ ໄດ້ເຫັນລິດໄຟຟ້າອັດສະລິຍະ ຮົ່ງຊີ ທຸ່ນກົ່ງ 08 ລຸ້ນໃໝ່ຈອດຢູ່ຂ້າງນອກ, ທ່ານຈຶ່ງນັ່ງຂ້າງຄົນຂັບ, ເບິ່ງພະນັກງານປະຕິບັດງານ ພ້ອມທັງຖາມຄຳຖາມຕ່າງໆ ເຊັ່ນ: “ອິນເຕີເນັດໃນລິດຕ້ອງເສຍຄ່າໃຊ້ຈ່າຍເພີ່ມເຕີມຕ່າງຫາກບໍ?” “ອຸດສາຫະກຳລິດໄຟຟ້າອັດສະລິຍະຂອງຈີນຕອນນີ້ພັດທະນາໄປຮອດລະດັບໃດແລ້ວ?” “ຫາກຄົນຍ່າງອອກຈາກບ່ອນຈອດລິດ, ລິດຈະສາມາດຂັບອອກມາເອງໄດ້ບໍ?”

ເມື່ອສາທິດການຈອດລິດອັດຕະໂນມັດ, ພະນັກງານອອກມາຈາກບ່ອນຂັບລິດ ໃຊ້ໂທລະສັບຄຸ້ມຄອງການຈອດລິດ, ໃນຂະນະທີ່ລິດບັງຄັບລ້ຽວ ແລະ ເຂົ້າບ່ອນຈອດເອງໂດຍອັດຕະໂນມັດ. ທ່ານ ອານຸສັກ ພິງສະຫວັດ ຈ້ອງເບິ່ງ ແລະ ພະຍັກໜ້າຊໍ້າໆ.

ທ່ານ ອານຸສັກ ພິງສະຫວັດ ມີຄວາມຮູ້ສຶກຊື່ນຊົມເປັນພິເສດຕໍ່ຍີ່ຫໍ້ ຮົ່ງຊີ. ທ່ານ ກ່າວວ່າ: “ເປັນເວລາດົນນານແລ້ວທີ່ ຮົ່ງຊີເປັນລິດປະຈຳຕຳແໜ່ງຫຼັກທີ່ຈີນຊ່ວຍເຫຼືອລັດຖະບານລາວ, ພະນັກງານລັດຖະບານ ແລະ ຜູ້ນຳຫຼາຍຄົນຂອງລາວເຄີຍນັ່ງ. ຕອນນີ້, ຈາກລິດທາງລັດຖະການທີ່ຄຸ້ນເຄີຍ, ມາເປັນລິດໄຟຟ້າອັດສະລິຍະທີ່ຈອດລິດເອງໄດ້, ການປ່ຽນແປງແມ່ນໃຫຍ່ຫຼວງຫຼາຍ.”

ປົກກະຕິ ທ່ານ ອານຸສັກ ພິງສະຫວັດ ກຳຂັບລິດໄຟຟ້າ. ທ່ານ ກ່າວວ່າ: “ບໍ່ຕ້ອງຄິດຫຼາຍເລື່ອງເຕີມນ້ຳມັນ, ບໍ່ຕ້ອງຄອຍເບິ່ງລາຄານ້ຳມັນໃນຕະຫຼາດໂລກທຸກວັນ, ປະຢັດເງິນ ແລະ ສະບາຍໃຈ.” ດັ່ງນັ້ນ, ເມື່ອນັ່ງຢູ່ໃນລິດໄຟຟ້າອັດສະລິຍະຂອງຈີນ, ທ່ານຈຶ່ງຖາມຢ່າງລະອຽດ ແລະ ເບິ່ງຢ່າງຕັ້ງໃຈ, ຕັ້ງແຕ່ຄ່າໃຊ້ຈ່າຍໃນການໃຊ້ລິດຈົນເຖິງຟັງຊັນອັດສະລິຍະ, ຕ້ອງເຂົ້າໃຈໃຫ້ໝົດທຸກຢ່າງ.

ລາວເປັນປະເທດທີ່ບໍ່ມີທາງຕິດກັບທະເລ, ແລະ ຜະລິດນ້ຳມັນເອງໄດ້ໜ້ອຍຫຼາຍ. ທ່ານ ອານຸສັກ ພິງສະຫວັດ ເວົ້າວ່າ: “ຫຼາຍກວ່າ 90% ຂອງນ້ຳມັນເຊື້ອໄຟລາວຕ້ອງນຳເຂົ້າຈາກໄທ ແລະ ຫວຽດນາມ. ເມື່ອລາຄານ້ຳມັນສາກົນຜັນຜວນ, ລາຄາສິນຄ້າໃນປະເທດ, ຕົ້ນທຶນການຂົນສົ່ງ ແລະ ການເຄື່ອນໄຫວຂອງເສດຖະກິດໂດຍລວມກໍຖືກກະທົບບາໍ.” ລັດຖະບານລາວໄດ້ຕັ້ງເປົ້າໝາຍ: ຮອດປີ 2030, ສ່ວນແບ່ງຕະຫຼາດລິດພະລັງງານໄຟຟ້າຈະບັນລຸ 30%.

ທ່ານ ອານຸສັກ ພິງສະຫວັດ ມີປະສົບການໃນຂະແໜງພະລັງງານມາຫຼາຍປີ ແລະ ເຂົ້າໃຈການປ່ຽນແປງຂອງຂະແໜງພະລັງງານໄຟຟ້າລາວຢ່າງຊັດເຈນ. ທ່ານເວົ້າວ່າ: “ໃນຊຸມປີ 1990, ໂຄງສ້າງພື້ນຖານດ້ານພະລັງງານໄຟຟ້າຂອງລາວຍັງອ່ອນແອ. ປີ 1996, ອັດຕາຄົວເຮືອນທົ່ວປະເທດທີ່ມີໄຟຟ້າໃຊ້ມີພຽງ 16%, ຄົວເຮືອນສ່ວນໃຫຍ່ປະສົບບັນຫາ ແລະ ຄວາມບໍ່ສະຖຽນໃນການເຂົ້າເຖິງໄຟຟ້າ. ຜ່ານມາຫຼາຍກວ່າ 20 ປີ, ຮອດປີ 2020, ຕົວເລກນີ້ໄດ້ເພີ່ມຂຶ້ນເປັນ 90%.” ປັດຈຸບັນ, ປະເທດລາວໄດ້ສ້າງຮູບແບບພະລັງງານໄຟຟ້າສະອາດທີ່ປະກອບດ້ວຍໄຟຟ້າພະລັງງານນ້ຳຕົກ, ໄຟຟ້າພະລັງງານລົມ ແລະ ພະລັງງານແສງຕາເວັນ ເສີມກັນ.

ຄ່າໄຟຟ້າຕ້ອງຖືກ ແລະ ສະຖຽນ, ແມ່ນສິ່ງຈຳເປັນສຳລັບການນຳລິດພະລັງງານໃໝ່ມາໃຊ້ກັນຢ່າງແຜ່ຫຼາຍ. ທ່ານ ອານຸສັກ ພິງສະຫວັດ ກ່າວວ່າ: ປະເທດລາວໄດ້ສະສົມຄວາມໝັ້ນໃຈບາງສ່ວນໃນດ້ານນີ້, ໂດຍສະເພາະການຮ່ວມມືດ້ານພະລັງງານໄຟຟ້າກັບຈີນ. ແນວໃດກໍດີ,ບັນຫາທີ່ແທ້ຈິງກໍຍັງມີຢູ່. ປະຊາຊົນຫຼາຍຄົນຢາກປ່ຽນໄປໃຊ້ລິດໄຟຟ້າ, ແຕ່ໃນໃຈຍັງມີຄຳຖາມຫຼາຍຢ່າງ: ຈະໄປຊື້ລິດຖືກຕ້ອງຕາມກົດໝາຍໄດ້ຢູ່ໃສ? ຄຸນນະພາບແບັດເຕີຣີເປັນແນວໃດ? ການບຳລຸງຮັກສາພາຍຫຼັງມີການຮັບປະກັນບໍ? ບັນຫາໃຫຍ່ທີ່ສຸດແມ່ນ ຊັບພະຍາກອນກັບ ເຕັກນິກ. ທ່ານໄດ້ໃຊ້ຄຳອຸປະມາ : “ມີອຸປະກອນແຕ່ບໍ່ຮູ້ວິທີໃຊ້ງານ ກໍເໝືອນກັບລົງໄດ້ໜາພ້າ - ເບິ່ງຄືວ່າດີຢູ່, ແຕ່ບໍ່ຮູ້ວ່າຈະເລີ່ມຕົ້ນຈາກບ່ອນໃດ.” ໃນທັດສະນະຂອງທ່ານແລ້ວ, ປະເທດລາວບໍ່ໄດ້ຂາດຊ່ອງທາງການຈັດຫາອຸປະກອນ, ແຕ່ຂາດແຄນຄົນທີ່ມີຄວາມສາມາດໃນການດຳເນີນງານ, ບຳລຸງຮັກສາ ແລະ ຝຶກອົບຮົມ. ຖ້າອຸປະກອນຊື້ມາແລ້ວ ບໍ່ມີຄົນຮູ້ເຕັກນິກຕິດຕັ້ງ, ບໍ່ມີຄົນສ້ອມແປງ ແລະ ບໍ່ມີຄົນບໍລິຫານດຳເນີນງານໄດ້, ອຸດສາຫະກຳດັ່ງກ່າວ ກໍຈະບໍ່ສາມາດພັດທະນາໄດ້. ດັ່ງນັ້ນ, ເລື່ອງການຝຶກອົບຮົມ ແລະ ການພັດທະນາລະບົບບຸກຄະລາກອນ ໃນດ້ານນີ້ ຈຶ່ງມີຄວາມສຳຄັນເປັນພິເສດ.

ໃນການສົນທະນາກັບຜູ້ຮັບຜິດຊອບທີ່ກ່ຽວຂ້ອງຂອງສະມາຄົມອຸດສາຫະກຳແບັດເຕີຣີຈີນ ສາຂາພະລັງງານເກັບສະສົມ, ທ່ານ ອານຸສັກ ພິງສະຫວັດ ກຳເວົ້າຢ່າງກົງໄປກົງມາວ່າ: “ປະເທດລາວຫວັງວ່າຈະຮ່ວມມືກັບຈີນໃນການພັດທະນາບຸກຄະລາກອນ, ການຝຶກອົບຮົມດ້ານເຕັກໂນໂລຊີ ແລະ ການສະໜັບສະໜູນອຸດສາຫະກຳຢ່າງເປັນຮູບປະທຳກ່ວ່າ.” ທ່ານເວົ້າວ່າ, ຈີນມີເຕັກໂນໂລຊີ ແລະ ປະສົບການທີ່ກ້າວໜ້າ, ລາວມີຊັບພະຍາກອນໄຟຟ້ານ້ຳຕົກ ແລະ ໂຊລາເຊລທີ່ອຸດົມສົມບູນ, ພ້ອມກັນນັ້ນຄວາມຕ້ອງການປ່ຽນແປງດ້ານພະລັງງານກໍຮີບດ່ວນ, ສອງຝ່າຍສາມາດສົມທົບກັນໄດ້. ທ່ານໄດ້ສັ່ງໃຫ້ຄະນະຂອງລາວເລັ່ງຂະບວນການປະສານງານ ແລະ ຈັດຕັ້ງປະຕິບັດບົດບັນທຶກຄວາມເຂົ້າໃຈກ່ຽວກັບການໂຄງການຝຶກອົບຮົມບຸກຄະລາກອນ ພະລັງງານໃໝ່ ລະຫວ່າງລາວ ແລະ ຈີນ.

ໃນກອງປະຊຸມເສວະນາກ່ຽວກັບການພັດທະນາອຸດສາຫະກຳ, ທ່ານ ອານຸສັກ ພິງສະຫວັດ ໄດ້ນຳເອົາຜົນການສັງເກດຈາກການເດີນທາງຢ້ຽມຢາມ ມາປະສານກັນ ແລະ ສະເໜີແນວຄິດຮ່ວມມື “ເຕັກໂນໂລຊີຂອງຈີນ + ໄຟຟ້າສີຂຽວຂອງລາວ + ຕະຫຼາດພາກພື້ນ”.

“ປະເທດລາວມີຊັບພະຍາກອນພະລັງງານໄຟຟ້ານ້ຳຕົກທີ່ອຸດົມສົມບູນ, ພ້ອມທັງມີຊັບພະຍາກອນພະລັງງານແສງຕາເວັນ, ພະລັງງານລົມ ແລະ ແຮ່ທາດລິທຽມສຳລັບອຸດສາຫະກຳແບັດເຕີຣີ, ຈຶ່ງມີທ່າແຮງໃນການກໍ່ສ້າງໃຫ້ເປັນຖານພະລັງງານສີຂຽວຂອງອາຊຽນ.” ທ່ານກ່າວ. “ແຕ່ອຸດສາຫະກຳຍັງຢູ່ໃນໄລຍະຟື້ນຕົວ, ຍັງຂາດຊີດຄວາມສາມາດໃນການປຸງແຕ່ງຂັ້ນສູງ, ລະບົບສະໜັບສະໜູນຕາມສາຍໂສ້ອຸດສາຫະກຳຍັງອ່ອນ, ເຮັດໃຫ້ຂໍ້ໄດ້ປຽບດ້ານຊັບພະຍາກອນບໍ່ສາມາດປ່ຽນເປັນມູນຄ່າອຸດສາຫະກຳໄດ້ຢ່າງເຕັມທີ່.”

ທ່ານມອງເຫັນພາບການໃຊ້ກຸ່ມອຸດສາຫະກຳແບັດເຕີຣີລິທຽມຂອງນະຄອນຊິນຢູ ເປັນຂອງທາງການຮ່ວມມື, ອີງໃສ່ທາງລົດໄຟ ລາວ-ຈີນ ແລະ ຕາຂ່າຍສາຍສົ່ງໄຟຟ້າ ລາວ-ຈີນ 500 ກິໂລໂວນ, ເພື່ອສົມທົບທ່າແຮງດ້ານການຜະລິດ ແລະ ເຕັກໂນໂລຊີຂອງຈີນ, ພະລັງງານໄຟຟ້າສະອາດຂອງລາວ ແລະ ຕະຫຼາດພາກພື້ນລ້ານຊ້າງ-ແມ່ນ້ຳຂອງ, ຈາກນັ້ນສ້າງຕ່ອງໂສ້ການສະໜອງພະລັງງານໃໝ່ທີ່ເຊື່ອມຕໍ່ແຮ່ທາດ, ໄຟຟ້າ, ວັດສະດຸ ແລະ ລິດໄຟຟ້າເຂົ້າດ້ວຍກັນ.

ທ່ານ ອານຸສັກ ພິງສະຫວັດ ຍັງໄດ້ກ່າວຕື່ມວ່າ, ໃນທ້າຍເດືອນຕຸລາ ທ່ານຈະນຳທີມງານເດີນທາງໄປຄຸນໝິງ ແຂວງຢຸນນານ ເພື່ອເຂົ້າຮ່ວມກອງປະຊຸມທີ່ກ່ຽວຂ້ອງກັບການສຶກສາວິຊາຊີບ. ທ່ານກ່າວວ່າ: “ນອກຈາກການຄົ້ນຄວ້າທາງວິທະຍາສາດ ແລະ ການຮ່ວມມືດ້ານອຸດສາຫະກຳແລ້ວ, ການຮ່ວມມືດ້ານການສຶກສາກໍ່ຕ້ອງໄດ້ ສິ່ງເສີມໄປພ້ອມໆກັນ ໃຫ້ເປັນລະບົບ, ໂດຍສະເພາະການຝຶກອົບຮົມບຸກຄະລາກອນ. ດ້ວຍວິທີນີ້, ປະເທດລາວຈຶ່ງຈະສາມາດບັນລຸບາດກ້າວກະໂດດທີ່ຍິ່ງໃຫຍ່ໃນຂົງເຂດພະລັງງານໃໝ່.”

ບົດໂດຍ: ວິມິນ (Yang Chunmei)

(ສະໜອງຂໍ້ມູນໂດຍ: ວາລະສານ “ຈ໋ຳປາ” ທີ່ຂຶ້ນກັບ ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ ແຂວງຢຸນນານ)

www.yunnangateway.com

